ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ 1172 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ: 02 ສິງຫາ2021

# ແຈ້ງການ

ເຖິງ: - ອົງການຈັດຕັ້ງ ພາກລັດ ແລະ ເອກະຊົນ;

- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
- ຫ້ອງການອຸດສາຫະກຳ ແລະ ການຄ້ານະຄອນ, ເມືອງ;
- ປະຊາຊົນບັນດາເຜົ່າ ແລະ ຜູ້ລົງທຶນ (ທັງພາຍໃນ ແລະ ຕ່າງປະເທດ) ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ແລະ ດຳເນີນທຸລະກິດຢູ່ ສປປ ລາວ.

ເລື່ອງ: ການປ່ຽນຊື່ເວັບໄຊຈາກ www.ned.gov.la (ອັນເກົ່າ) ມາເປັນເວັບໄຊ www.ned.moic.gov.la (ອັນໃໝ່).

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020
- ອີງຕາມ ໜັງສືສະເໜີ ຂໍຝາກລະຫັດອິນເຕີເນັດ ຫຼື ຝາກເວັບໄຊ ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ສະບັບເລກທີ 0548/ກທຄວ.ສລ, ລົງວັນທີ 14 ມິຖຸນາ2020.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານຊາບວ່າ: ເພື່ອເຮັດໃຫ້ການບໍລິການຂໍ້ມູນຂ່າວສານ ກ່ຽວກັບວຽກງານທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ໃຫ້ໄດ້ຖືກເຜີຍແຜ່ ອອກສູ່ສາທາລະນະຊົນຫຼາຍຂຶ້ນ, ຈຶ່ງແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ກ່ຽວກັບການປ່ຽນຊື່ເວັບໄຊຖານຂໍ້ມູນວິສາຫະກິດແຫ່ງຊາດ ທີ່ຂຶ້ນກັບກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ດັ່ງນີ້:

1. ປ່ຽນຊື່ເວັບໄຊ(www.ned.gov.la) ອັນເກົ່າ, ປ່ຽນມາເປັນເວັບໄຊ(www.ned.moic.gov.la) ອັນໃໝ່;
2. ເພີ່ມຫົວຂໍ້ "ການຂໍອະນຸຍາດດຳເນີນທຸລະກິດ" ເພື່ອເປັນການໃຫ້ຂໍ້ມູນກ່ຽວກັບເງື່ອນໄຂ, ແລະ ຂັ້ນຕອນ ການຂໍອະນຸຍາດ ດຳເນີນທຸລະກິດ ຂອງບັນດາຂະແໜງການ, ໃສ່ໃນເວັບໄຊ (www.ned.moic.gov.la)

สแกนด้วย CamScanner

3. ເພີ່ມຫົວຂໍ້ "ການເຂົ້າສູ່ລະບົບລາຍງານ", ເພື່ອເປັນການຕິດຕາມການເຄື່ອນໄຫວ ຂອງວິສາຫະກິດ ພາຍຫຼັງໄດ້ ຂຶ້ນທະບຽນວິສາຫະກິດ ແລະ ທັງເປັນການສະດວກ ໃຫ້ແກ່ວິສາຫະກິດໃນການລາຍງານໂດຍບໍ່ຈຳເປັນຕ້ອງ ເຂົ້າມາພົບເຈົ້າໜ້າທີ່ ທະບຽນວິສາຫະກິດ, ໃສ່ໃນເວັບໄຊ (www.ned.moic.gov.la )
4. ຜູ້ສົນໃຈສາມາດໃຊ້ບໍລິການໄດ້ໂດຍບໍ່ຈຳກັດ ວັນ, ເວລາ ແລະ ບໍ່ໄດ້ເສຍຄ່າບໍລິການ.
5. ແຈ້ງການສະບັບນີ້ ປ່ຽນແທນ ສະບັບເລກທີ 1452/ທອຄ.ກທຄວ, ລົງວັນ 19 ກໍລະກົດ2019.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ.

ຮັກສາການແທນຫົວໜ້າຫ້ອງການ ຯ.

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ບ.ກິ່ງສະດອນ ເພັດດາວເຮືອງ



สแกนด้วย CamScanner